# ແຜນການພາກສ່ວນຄວບຄູ່

## 1. ການນຳໃຊ້

**1.1** ເອກະສານສະບັບນີ້ປະກອບເປັນແຜນການພາກສ່ວນຄວບຄູ່ຕາມທີ່ໄດ້ກ່າວເຖິງໃນເງື່ອນໄຂ ແລະ ຈະນຳໃຊ້ໃນກໍລະນີທີ່ລູກຄ້າແມ່ນ ຄູ່ຮ່ວມ ຫຼື ດຳເນີນການໃນນາມຜູ້ທີ່ໄດ້ຮັບມອບໝາຍແທນ.

**1.2** ແຜນການພາກສ່ວນຄວບຄູ່ເປັນສ່ວນເພີ່ມເຕີມໃຫ້ກັບເງື່ອນໄຂຂອງທະນາຄານ. ຍົກເວັ້ນໃນກໍລະນີທີ່ລະບຸໃນແຜນການຄວບຄູ່ສະບັບນີ້, ຄຳສັບທີ່ພິມເປັນໂຕໃຫຍ່ໃນແຜນການພາກສວນຄວບຄູ່ຈະມີຄຳນິຍາມສະເພາະໃນຕາຕະລາງຄຳນິຍາມ.

## 2. ການດຳເນີນງານຂອງບັນຊີຄູ່ຮ່ວມ ແລະ ການບໍລິການ

**2.1** **ບັນດາໜີ້ສິນຮ່ວມກັນ**. ໃນກໍລະນີທີ່ເປັນບັນຊີຄູ່ຮ່ວມ:

ກ) ຂໍ້ຕົກລົງ ແລະ ບັນດາຄວາມຮັບຜິດຊອບຕ່າງໆຂອງບັນຊີດັ່ງກ່າວ ລວມທັງທີ່ລະບຸໃນບົດບັນຍັດຂອງການບໍລິການແມ່ນຕ້ອງໄດ້ຜູກມັດບັນດາຄູ່ຮ່ວມກັນເຖິງວ່າຈະມີການປ່ຽນແປງສ່ວນປະກອບ ຫຼື ລະບຽບທີ່ກ່ຽວຂ້ອງກັບບັນດາຄູ່ຮ່ວມ ຫຼື ການກະສຽນ ຫຼື ການຮັບເຂົ້າໃໝ່ຂອງໜຶ່ງ ຫຼື ຫຼາຍຄູ່ຮ່ວມ ຫຼື ອື່ນໆ;

ຂ) ຖ້າຫາກວ່າຄູ່ຮ່ວມໃດໜຶ່ງຫາກຕາຍ ຫຼື ກະສຽນ (ຫຼື ການຮ່ວມມືກັນສິ້ນສຸດລົງ), ທະນາຄານຈະໄດ້ນຳໃຊ້ດຸນພິນິດຂອງທະນາຄານເອງໃນການຕັດສິນຍອດຄົງຄ້າງຂອງໜີ້ສິນຂອງລູກຄ້າໃຫ້ຕົກເປັນຂອງຄູ່ຮ່ວມທີ່ຍັງມີຊີວິດຢູ່; ແລະ

ຄ) ບັນດາຄູ່ຮ່ວມຕົກລົງເຫັນດີໃນການຮັບປະກັນວ່າຄູ່ຮ່ວມໃໝ່ຈະຮັບເອົາບັນດາໜີ້ສິນພາຍໃຕ້ເງື່ອນໄຂ ແລະ ຂໍ້ຕົກລົງຂອງທະນາຄານ ແລະ ທະນາຄານຈະໄດ້ປະຕິບັດຕໍ່ຄູ່ຮ່ວມໃໝ່ທັງໝົດຄືກັນກັບຜູ້ມີສິດໃນການເປັນຕົວແທນຂອງການຮ່ວມມືກັນ ບໍ່ວ່າຈະເປັນຂໍ້ຕົກລົງ, ບັນຊີ ຫຼື ການບໍລິການ.

**2.2** **ການປ່ຽນແປງການຮ່ວມມືກັນ**. ບໍ່ວ່າຈະເປັນການປ່ຽນແປງສ່ວນປະກອບ ຫຼື ລະບຽບທີ່ກ່ຽວຂ້ອງກັບ ບັນດາຄູ່ຮ່ວມລວມທັງການເສຍຊີວິດ, ການກະສຽນ ຫຼື ການຮັບເຂົ້າໃໝ່ຂອງໜຶ່ງ ຫຼື ຫຼາຍຄູ່ຮ່ວມ ຫຼື ອື່ນໆທີ່ຈະສາມາດປ່ຽນແປງອຳນາດຕາມທີ່ລະບຸໃນມາດຕາ 1.3 ຂອງເງື່ອນໄຂ ຫຼື ການແຕ່ງຕັ້ງຜູ້ມີອຳນາດ ຫຼື ຕົວແທນບໍ່ວ່າໃນທາງໃດກໍຕາມ ແລະ, ນອກຈາກ ວ່າທະນາຄານຈະໄດ້ຮັບແຈ້ງຈາກຝ່າຍກົງກັນຂ້າມເປັນລາຍລັກອັກສອນພ້ອມລາຍເຊັນຂອງຄູ່ຮ່ວມທີ່ເຫຼືອ, ທະນະຄານ, ຖ້າຫາກວ່າສາມາດເຮັດໄດ້,ຈະຖືເອົາຕໍ່ຜູ້ຮ່ວມທີ່ເຫຼືອເປັນບຸກຄົນມີອຳນາດເຕັມໃນການດຳເນີນທຸລະກິດຕໍ່ ແລະ ຈະພົວພັນກ່ຽວກັບບັນຊີ ແລະ ມອບການບໍລິການໃຫ້ຄືກັນກັບວ່າບໍ່ມີ ການປ່ຽນແປງໃດໆ.

## 3. ການດຳເນີນງານຂອງບັນຊີຕົວແທນ ແລະ ການບໍລິການ

**3.1** ໃນກໍລະນີທີ່ລູກຄ້າຫາກດຳເນີນການໃນນາມຜູ່ທີ່ໄດ້ຮັບມອບໝາຍແທນໃນການດຳເນີນງານບັນຊີ ຫຼື ການນຳໃຊ້ການບໍລິການ, ຂອງລູກຄ້າ:

ກ) ສະແດງ ແລະ ຢັ້ງຢືນຕໍ່ທະນາຄານວ່າ:

(i) ອົງການທີ່ເປັນຕົວແທນແມ່ນຖືກສ້າງຕັ້ງຢ່າງຖືກຕ້ອງ, ມີຕົວຕົນຢ່າງແທ້ຈິງ ແລະ ຖືກແຕ່ງຕັ້ງເປັນຕົວແທນຢ່າງຖືກຕ້ອງ ລວມທັງມີຜູ່ໄດ້ຮັບມອບໝາຍເປັນຕົວແທນຢ່າງຄົບຖ້ວນ;

(ii) ລູກຄ້າມີສິດແລະອຳນາດເຕັມທີ່ຄືກັນກັບຕົວແທນໃນການນຳໃຊ້ ແລະ ດຳເນີນການເຄື່ອນໄຫວບັນຊີ ຫຼື ນຳໃຊ້ການບໍລິການຕ່າງໆໃນລັກສະນະທີ່ລູກຄ້າເປັນຜູ້ນຳໃຊ້;

(iii) ໃນການເຂົ້າຮ່ວມໃນຂໍ້ຕົກລົງ ແລະ ນຳໃຊ້ບັນຊີ ແລະ ການບໍລິການ, ລູກຄ້າແມ່ນຖືເປັນຜູ້ໄດ້ຮັບຜົນປະໂຫຍດຂອງ ຕົວແທນໃນທູກເວລາ; ແລະ

(iv) ມີສິດທີ່ຈະໄດ້ຮັບການຄຸ້ມຄອງຈາກຊັບສິນຂອງຕົວແທນ ອີງຕາມພັນທະ ແລະ ຄວາມຮັບຜິດຊອບພາຍໃຕ້ ຂໍ້ຕົກລົງ ຫຼື ທຸລະກຳທີ່ໄດ້ຮັບຜົນກະທົບຈາກທະນາຄານຕາມການມອບໝາຍຂອງລູກຄ້າ, ເຊິ່ງສິດຂອງການຄຸ້ມຄອງບໍ່ໄດ້ຖືກປະຕິເສດ ຫຼື ຈຳກັດໃນເງື່ອນໄຂໃດໆ; ແລະ

ຂ) ເຫັນດີ:

(i) ບໍ່ອະນຸຍາດໃຫ້ມີການປ່ຽນແປງເງື່ອນໄຂການປະຕິບັດງານຂອງຕົວແທນ ຍົກເວັ້ນລູກຄ້າໄດ້ແຈ້ງຕໍ່ທະນາຄານຢ່າງເປັນລາຍລັກອັກສອນ;

(ii) ແຈ້ງຕໍ່ທະນາຄານໃນກໍລະນີທີ່ທີການຍົກເລີກ, ການລາອອກ ຫຼື ການແຕ່ງຕັ້ງຜູ່ໄດ້ຮັບມອບໝາຍເປັນຕົວແທນ ຫຼື ຜູ້ອຳນວຍການຂອງບໍລິສັດ ທີ່ເປັນຕົວແທນ;

(iii) ກໍລະນີມີການຍົກເລີກ, ການລາອອກ ຫຼື ການແຕ່ງຕັ້ງຜູ່ໄດ້ຮັບມອບໝາຍເປັນຕົວແທນ, ທະນາຄານອາດຕ້ອງໄດ້ຖືວ່າຕົວແທນທີ່ເຫຼືອມີສິດເປັນບຸກຄົນມີອຳນາດເຕັມໃນການດຳເນີນທຸລະກິດການເປັນຕົວແທນຕໍ່ ແລະ ຈະພົວພັນກ່ຽວກັບບັນຊີ ແລະ ມອບການບໍລິການໃຫ້ຄືກັນກັບວ່າບໍ່ມີການປ່ຽນແປງໃດໆ; ແລະ

(iv) ເພື່ອຮັບປະກັນວ່າບັນດາຕົວແທນໃໝ່ຈະຮັບເອົາບັນດາໜີ້ສິນພາຍໃຕ້ເງື່ອນໄຂ ແລະ ຂໍ້ຕົກລົງຂອງທະນາຄານ ແລະ ທະນາຄານຈະໄດ້ປະຕິບັດຕໍ່ຕົວແທນໃໝ່ທັງໝົດຄືກັນກັບຜູ້ມີສິດໃນການເປັນຕົວແທນຂອງການຮ່ວມມືກັນບໍ່ວ່າຈະເປັນຂໍ້ຕົກລົງ, ບັນຊີ, ການບໍລິການ ແລະ ບັນດາທຸລະກຳທີ່ກ່ຽວຂ້ອງ.